ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 513 /ນຍ

ນະຄອນຫລວງວຽງຈັນ, ວັນທີ 18.09.2020.

# ດຳລັດ

## ວ່າດ້ວຍການສັບຊ້ອນກົງຈັກການຈັດຕັ້ງ

## ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມໜັງສືສະເໜີ ສະບັບເລກທີ 206/ພນ, ລົງວັນທີ 10 ກັນຍາ 2020 ຂອງກະຊວງພາຍໃນ.

## ນາຍົກລັດຖະມົນຕີ ອອກດຳລັດ :

ມາດຕາ 1 ຍຸບເລີກ ກົມນິຕິກຳ ແລ້ວສັບຊ້ອນວຽກງານນິຕິກຳ ເຂົ້າຫ້ອງການກະຊວງ, ປ່ຽນຊື່ກົມແຜນການ-ການເງິນ ເປັນກົມການເງິນ, ສັບຊ້ອນວຽກແຜນການເຂົ້າກົມຮ່ວມມືສາກົນ ແລະ ປ່ຽນຊື່ເປັນກົມແຜນການ ແລະ ການຮ່ວມມືສາກົນ. ສັບຊ້ອນຫົວໜ່ວຍວິຊາການອັນດັບສອງຂຶ້ນກັບກະຊວງຄື: ກອງລະຄອນຕຸກກະຕາແຫ່ງຊາດ, ກອງລະຄອນເວົ້າແຫ່ງຊາດ ແລະ ກອງລະຄອນລຳແຫ່ງຊາດ ເປັນກອງລະຄອນແຫ່ງຊາດ, ໂຮມສູນວັດທະນະທຳເດັກ ເຂົ້າກັບກົມວັດທະນະທຳມະຫາຊົນ ແລະ ໂຮມວາລະສານວັນນະສິນເຂົ້າກັບກົມພິມຈຳໜ່າຍ ແລ້ວປ່ຽນຊື່ເປັນກົມວັນນະຄະດີ ແລະ ພິມຈຳໜ່າຍ.

ມາດຕາ 2 ໂຄງປະກອບກົງຈັກ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ປະກອບດ້ວຍ:

1. ຫ້ອງການ;
2. ກົມຈັດຕັ້ງ ແລະ ພະນັກງານ;
3. ກົມກວດກາ;
4. ກົມການເງິນ;
5. ກົມແຜນການ ແລະ ການຮ່ວມມືສາກົນ;
6. ກົມສື່ມວນຊົນ;
7. ກົມສິລະປະການສະແດງ;
8. ກົມວັດທະນະທຳມະຫາຊົນ;
9. ກົມວັນນະຄະດີ ແລະ ພິມຈຳໜ່າຍ;
10. ກົມມໍລະດົກ;
11. ກົມຮູບເງົາ;

12. ກົມວິຈິດສິນ;
13. ກົມພັດທະນາການທ່ອງທ່ຽວ;
14. ກົມໂຄສະນາການທ່ອງທ່ຽວ;
15. ກົມຄຸ້ມຄອງການທ່ອງທ່ຽວ;

ຫົວໜ່ວຍວິຊາການ ລະດັບ 1 ທີ່ຂຶ້ນກັບກະຊວງ ປະກອບດ້ວຍ:

1. ວິທະຍຸກະຈາຍສຽງແຫ່ງຊາດລາວ;
2. ໂທລະພາບແຫ່ງຊາດລາວ;
3. ສຳນັກຂ່າວສານປະເທດລາວ;
4. ໜັງສືພິມປະຊາຊົນ;
5. ໜັງສືພິມພາສາຕ່າງປະເທດ;
6. ສະຖາບັນສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ;
7. ສະຖາບັນວິຈິດສິນແຫ່ງຊາດ.

ຫົວໜ່ວຍວິຊາການລະດັບ 2 ທີ່ຂຶ້ນກັບກະຊວງ ປະກອບດ້ວຍ:

1. ກອງສິລະປະກອນແຫ່ງຊາດ;
2. ກອງກາຍຍະສິນແຫ່ງຊາດ;
3. ກອງລະຄອນແຫ່ງຊາດ;
4. ຫໍສະໝຸດແຫ່ງຊາດ;
5. ຫໍພິພິທະພັນແຫ່ງຊາດ;
6. ຫໍວັດທະນະທຳແຫ່ງຊາດ;
7. ໂຮງຮຽນສິລະປະແຫ່ງຊາດ;
8. ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ;
9. ກອງບູຮານວິທະຍາ;
10. ຫ້ອງການມໍລະດົກໂລກຫຼວງພະບາງ;
11. ຫ້ອງການມໍລະດົກໂລກວັດພູຈຳປາສັກ;
12. ຫ້ອງການມໍລະດົກໂລກໄຫຫີນຊຽງຂວາງ;
13. ວິທະຍາໄລວິຈິດສິນພື້ນເມືອງຫຼວງພະບາງ.

ກົງຈັກການຈັດຕັ້ງ ຂອງອົງການປົກຄອງທ້ອງຖິ່ນທີ່ຢູ່ພາຍໃຕ້ການຊີ້ນຳທາງດ້ານວິຊາການ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີດັ່ງນີ້:

1. ຂັ້ນແຂວງ ມີ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ນະຄອນຫຼວງ;
2. ຂັ້ນເມືອງ ມີ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ເທດສະບານ, ນະຄອນ. ການສ້າງຕັ້ງ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ນະຄອນຫຼວງ ແລະ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ເທດສະບານ, ນະຄອນ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 3** ຍົກເລີກເນື້ອໃນ ມາດຕາ 5 ຂອງດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 95/ນຍ, ລົງວັນທີ 9 ມີນາ 2017.

**ມາດຕາ 4** ມອບໃຫ້ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ, ບັນດາກົມ ແລະ ບັນດາຫົວໜ່ວຍວິຊາການຄືນໃໝ່ ໃຫ້ມີຄວາມຖືກຕ້ອງ, ຈະແຈ້ງ ແລະ ຮັດກຸມ.

**ມາດຕາ 5** ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດ ສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 6** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ນຳໃຊ້ຄວບຄູ່ກັນກັບດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 95/ນຍ, ລົງວັນທີ 9 ມີນາ 2017 .

**ນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ